ກຳລັງທັບເສຣີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento. CA 95818 U.S.A.
www.laofreedom.com

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ.**

*** ຫ້ອງການ ປະທານພັກເສຣີປະຊາທິປະໄຕລາວ.**

**ສັບບທີ ໔໐໔ ປພຖຊ/ ໑໐໔໗໐໗**

# ບົດຄວາມ

## ຢາກປາບປາມຢາເສບຕິດ ຕ້ອງປ່ຽນຣັຖບານ

ການປາບປາມຢາເສບຕິດ ດ້ວຍວິທີຮຽກຮ້ອງໃຫ້ພັກຣັດ ໃຊ້ມາຕການ ປາບປາມເອົາເອງ ຫລື ຂໍໃຫ້ເຂົ້າຮ່ວມກອງປະຊຸມຕ່າງໆ ທັງໃນແລະນອກປະເທດ ກ່ຽວກັບຜົນສະທ້ອນ ທີ່ມາຈາກຢາເສບ ຕິດ ທາງດ້ານອາສຍາກັມ, ທາງດ້ານການພັທນາເສຖກິດ ສັງຄົມ ແລະໃຫ້ການຊ່ວຍເຫລືອພັກຣັດ ຢ່າງຫລວງຫລາຍນັ້ນ, ບໍ່ໄດ້ຜົນເທົ່າທີ່ຄວນ...ຍ້ອນພັກຣັດບໍ່ມີຄວາມຈິງໃຈໃນການແກ້ໄຂບັນຫາໃຫ້ ໝົດໄປໄດ້. ພັກຣັດແມ່ນໄດ້ລ້ຽງບັນຫານີ້ໄວ້ ເພື່ອເປັນຂໍ້ຕໍ່ລອງ, ຍາດແຍ່ງເອົາການຊ່ວຍເຫລືອ ຈາກສາກົນ ມາເຂົ້າຖົງຂອງພວກເຂົາເຈົ້າເທົ່ານັ້ນເອງ.

ສັ້ນ, ຫາກຢາກແກ້ໄຂບັນຫາການຜລິດ ແລະການຄ້າຢາເສບຕິດ ໃຫ້ໄດ້ຜົນດີ, ຕ້ອງແກ້ທີ່ ຕົ້ນຕໍຂອງບັນຫາ ຄື: ພັກຣັຖວຽງຈັນ ຕ້ອງປ່ຽນຣັຖບານໂດຍໄວ!.

ທ່ານ ບົວສອນ ບຸບຜາວັນ ນາຍົກຣັຖມົນຕຣີ ໄດ້ກ່າວໃນວັນຕ້ານຢາເສບຕິດສາກົນ ປີ2006 ວ່າຣັຖບານຂອງທ່ານ ໄດ້ເອົາໃຈໃສ່ເປັນພິເສດໃນການປາບປາມຢາເສບຕິດໃຫ້ໂຫດ. ແຕ່ໃນຄວາມ ເປັນຈິງແລ້ວ, ສປປລາວ. ຍັງເປັນບ່ອນຜລິດຢາເສບຕິດ ອັນດັບ 2 ຂອງໂລກ! ຖືວ່າເປັນພັຍ ຖຸກຄາມ ທາງດ້ານອາສຍາກັມ, ດ້ານເສຖກິດ ແລະສັງຄົມ ຢ່າງຮ້າຍແຮງທີ່ສຸດ!.

ພັກຣັດ ໄດ້ປະກາດ ຢຸດຕິການປູກຝິ່ນຢ່າງສິ້ນເຊີງ ມາຕັ້ງແຕ່ປີ 2006 ແຕ່ ຕຳຣວດ ຊ້ຳ ພັດຈັບຢາຝິ່ນໄດ້ 40 kg. ຢູ່ສນາມບິດວັດໄຕ ແລະຢູ່ໂຮງໄປຣສະນີ. ສິ່ງທີ່ຂາຍໜ້າທີ່ສຸດ ໃນປະ ຈຸບັນນີ້, ກໍຄືການຈັບຢາບ້າກັນຊາ, ເຮໂຣອີນ ຢູ່ເປັນປະຈຳ ຕາມ 4 ເຂດໃຫຍ່ ທີ່ສົ່ງຜ່ານຊາຍ ແດນລາວ-ໄທຍ ຈາກແຂວງ ໄຊຍະບຸຣີ ເຂົ້າສູ່ ຈັງຫວັດເລີຍ, ຈາກແຂວງວຽງຈັນ-ບໍຣິຄຳໄຊ

ເຂົ້າສູ່ຈັງຫວັດໜອງຄາຍ, ຈາກແຂວງສວັນເຂດ ເຂົ້າສູ່ ຈັງຫວັດມຸກດາຫານ ແລະຈາກແຂວງ ຈຳປາສັກ ເຂົ້າສູ່ຈັງຫວັດອຸບົລ. ແຕ່ລະປີ, ຢາບ້າຈາກ 4 ເສັ້ນທາງ ເຂົ້າສູ່ພາກ ອີສານຂອງໄທຍ ມີບໍ່ຕ່ຳກວ່າ 32 ລ້ານເມັດ ນັບແຕ່ປີ 2001ເປັນຕົ້ນມາ. ການຈັບກັນຊາຄັ້ງຍິ່ງໃຫຍ່ຢູ່ປະເທດ ໄທຍ ໃນວັນທີ 5 ຕຸລາ 2007 ຊຶ່ງມີເຖິງ 1,400 ແທ່ງ ທີ່ມາຈາກລາວ. ອັນນີ້, ກໍສແດງ ໃຫ້ເຫັນ ເຖິງຄຳເວົ້າຂອງທ່ານ ບົວສອນ ບຸບຜາວັນ ທີ່ວ່າ ສປປລາວ. ບໍ່ມີການປູກຝິ່ນ-ປູກຊາ ແລະຄ້າຢາບ້າ ເຮໂຣອີນນັ້ນ, ບໍ່ເປັນມູນຄວາມຈິງ!

ສປປລາວ. ເປັນປະເທດນຶ່ງ ທີ່ຖືກຊາວໂລກກ່າວປະນາມແລະຈັບຕາເບິ່ງ ມາແຕ່ປີ 1988 ວ່າ ການຜລິດ ແລະຄ້າຢາເສບຕິດນັ້ນ, ແມ່ນເປັນນະໂຍບາຍ ຂອງຣັຖບານ. ພັກຣັດ ເປັນຜູ້ ຜລິດຢາຝິ່ນ, ກັນຊາ,ຢາບ້າ,ເຮໂຣອີນແລະມອບໃຫ້ 2 ແຂວງຂອງລາວ ເປັນຜູ້ສົ່ງຊ່ຽນຊາຍອອກ ຕ່າງປະເທດ (The Washington Post 8/30/88). – ຕົວຢ່າງໃນເດືອນ ມົກກະຣາ 1988 ເຈົ້າໜ້າທີ່ D.E.A. ໄດ້ຈັບເຮໂຣອີນ 35 kg. ຢູ່ New York City ແລະ 2 ເດືອນຕໍ່ມາ ກໍຈັບເຮໂຣອີນໄດ້ອີກ 56 kg. ຢູ່ San Diego ທັງສອງເທື່ອນີ້, ແມ່ນມາຈາກລາວ.

ໃນເມື່ອຖືກໂລກບີບຣັດຢ່າງຮຸນແຮງ, ພັກຣັດ ຈຶ່ງອອກມາຫລິ້ນລະຄອນລວງຕາໂລກ ດ້ວຍ ວິທີປະກາດ ຈັບກຸ່ມຜລິດຢາເສບຕິດຢູ່ຫ້ວຍຊາຍ ພ້ອມທັງບອກວ່າ ໃນນັ້ນ ມີຄນະແຂວງ ຮ່ວມ ຢູ່ນຳດ້ວຍ. ທັງນີ້, ກໍເພື່ອໃຫ້ອົງການຈັດຕັ້ງສາກົນ ຫລົງເຊື່ອວ່າ ພັກຣັດວຽງຈັນ ໄດ້ໃຫ້ການ ຮ່ວມມື ໃນການປາບປາມຢາເສບຕິດໃຫ້ໂທດນີ້ ຢ່າງເອົາຈິງເອົາຈັງແທ້.

ຕົກມາໃນປີ 2000-2001 ພັກຣັດ ໄດ້ຂຍາຍໂຮງງານ ຜລິດຢາບ້າຂຶ້ນຕື່ມ ຈາກ 5 ແຫ່ງ ເປັນ 7 ແຫ່ງ; ສາມາດຜລິດຢາບ້າ ໄດ້ວັນລະ 2,7 ລ້ານເມັດ. ເມື່ອໂຮງງານຜລິດທຸກບ່ອນ ຖືກເສັຽລັບ; ພັກຣັດ ຈຶ່ງຫັນມາໃຊ້ຣົຖຕູ້ເຄື່ອນທີ່ ເປັນບ່ອນຜລິດຂຶ້ນແທນ.

ກ່ຽວກັບການຜລິດແລະສົ່ງຊ່ຽນຢາເສບຕິດນີ້, ພັກຣັດ ໄດ້ມອບສິດພິເສດໃຫ້ໜ່ວຍງານ ສະເພາະ ເປັນຜູ້ຮັບຜິດຊອບ, ໂດຍໃຫ້ໃຊ້ເຄື່ອງໝາຍ ຕຣາຫົວສິງໂຕເປັນຕົວແທນອຳນາດຜເດັດ ການ, ມີສິດເຄື່ອນໄຫວໄປມາໄດ້ ທຸກຫົນທຸກແຫ່ງ ໃນທົ່ວປະເທດ.

ປະຈຸບັນ, ເມືອງລາວ ໄດ້ກາຍເປັນສູນກາງການຄ້າ ແລະຜລິດຢາເສບຕິດ ໃນພາກພື້ນເອເຊັຽ ຕາວັນອອກ, ວຽງຈັນ ໄດ້ກາຍເປັນຈຸດນັດພົບ ຂອງນັກຄ້າຢາເສບຕິດ ຈາກປະເທດຈີນ, ຮົງກົງ, ວຽດນາມ, ມາເລເຊັຽ, ແລະອອສເຕຣເລັຽ (VOA 9/18/07).

ເພື່ອປົກປິດບັນຫານີ້, ພັກຣັດ ກໍໄດ້ອອກມາຫລິ້ນລະຄອນອີກຄັ້ງໃໝ່ ເພື່ອໃຫ້ສາກົນຕາຍໃຈນ້ຳ ວ່າ ພັກຣັດໄດ້ເອົາຈິງເອົາຈັງແທ້ ໃນການປາບປາມຢາເສບຕິດ ດ້ວຍວິທີປະກາດ ຕັດສິນລົງໂທດ ປະຫານຊີວິດ ແລະຈຳຄຸກຕລອດຊີວິດ ຂອງຜູ້ມີຢາເສບຕິດໄວ້ໃນຄອບຄອງ... ແຕ່ມັນກໍເປັນພຽງ ນະໂຍບາຍ ປາດຄໍໄກ່ ໃສ່ໜ້າລີງເທົ່ານັ້ນເອງ!.

ພວກເຮົາ ປະຊາຊົນພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ ມີຄວາມວິຕົກ ແລະເປັນ

ຫ່ວງເປັນໃຍ ຕໍ່ອະນາຄົດ ຂອງເຍົາວະຊົນລາວ, ຊຶ່ງປະຈຸບັນນີ້, ພັກຣັດ ໄດ້ເບື່ອເມົາ ໃຫ້ມົ້ວສຸມ ຢູ່ໃນວົງລ້ອມຂອງກົນໄກອະບາຍະມຸກຢ່າງໜັກໜ່ວງ!. ພວກເຂົາ ໄດ້ກາຍເປັນຄົນ ກິນເຫລົ້າເມົາຢາ, ຕິດການພນັນ, ເປັນນັກເລງອັນຕະພານ; ໂດຍສະເພາະ ຢູ່ໃນໝູ່ນັກຮຽນຊັ້ນປະຖົມ, ຊັ້ນມັທຍົມ ແລະຊັ້ນອຸດົມ ໄດ້ຕົກເປັນທາດຂອງຢາເສບຕິດໄປແລ້ວ ບໍ່ຕໍ່າກວ່າ 15%. ພວກເຂົາໄດ້ກາຍເປັນຄົນພິການໄປໃນຕົວ. ພວກເຂົາ ບໍ່ພຽງແຕ່ສ້າງຄວາມຫຍຸ້ງຍາກສັບສົນ ໃຫ້ພໍ່ແມ່ພີ່ນ້ອງເທົ່ານັ້ນ... ພວກເຂົາ, ຍັງໄດ້ກາຍເປັນຕົວທ່ວງດຶງຄວາມກ້າວໜ້າຂອງປະເທດຊາດໄປນຳດ້ວຍ!.

ພວກເຮົາ ຂໍຮຽກຮ້ອງມາຍັງ ອົງການຈັດຕັ້ງສາກົນ ຢ່າໄດ້ຫລົງກົນລວງ ຂອງພັກຣັດວຽງຈັນ ອີກຕໍ່ໄປ... ເພາະການທີ່ພັກຣັດສແດງໂຕ ເປັນຜູ້ໃຫ້ຄວາມຮ່ວມໄມ່ຮ່ວມມືກັບສາກົນ ຕ້ານການຜລິດແລະຄ້າຢາເສບຕິດນັ້ນ, ມັນເປັນພຽງອຸບາຍສ້າງເງື່ອນໄຂ ຂໍການຊ່ວຍເຫລືອລ້າ ມາເຂົ້າຖົງຂອງພວກເຂົາເທົ່ານັ້ນເອງ.

ການແກ້ໄຂບັນຫາຢາເສບຕິດໃນລາວນັ້ນ, ຕ້ອງແກ້ໄຂທີ່ຕົ້ນຕໍຂອງບັນຫາ ຄື: ຕັດການຊ່ວຍເຫລືອ ແລະບີບຣັດ ໃຫ້ພັກຣັດວຽງຈັນ ຕ້ອງປ່ຽນຣັຖບານ ໂດຍໄວ.

**ສູນກາງຕາງໜ້າ**
**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ**
**ກອງວິຈັຍ**
**ວັນທີ ໒໗ ຕຸລາ ໒໐໐໗.**